# ເຊີນຮ່ວມມືໃນການສຳຫລວດພົລະເມືອງຂອງສົກປີ ໒໐໐໐

ຜົນທີ່ທ່ານຈະໄດ້ຮັບຂອງການສຳຫລວດສັມະໂນຄົວພົລະເມືອງຂອງສົກປີ ໒໐໐໐ ນີ້ຈະໄດ້ມີຜົນສະທ້ອນຕໍ່ທ່ານ,ຕໍ່ເດັກຂອງທ່ານ ແລະ ຕໍ່ຊາວບ້ານໄກ້ເຮືອນຄຽງຂອງທ່ານນັ້ນ.

## *ການໃຫ້ຄຳຕອບຂອງທ່ານນັ້ນມັນເປັນຄວາມສຳຄັນ!*

### ການສຳຫລວດພົລະເມືອງຂອງ ສົກປີ ໒໐໐໐ ນີ້ ແມ່ນຫຍັງ???

ທຸກໆສິບປີ, ທາງໂອງການສຳຫລວດສັມະໂນຄົວພົລະເມືອງຈະຕ້ອງໄດ້ມີການສຳຫລວດກວດຈຳນວນຄົນທີ່ມີຢູ່ໃນສະຫະຣັຖອາເມຣິການີ້. ການຈະສຳຫລວດພົລະເມືອງຂອງຄັ້ງຕໍ່ໄປນີ້ຈະເອີ້ນວ່າ; "ສຳຫລວດກວດພົລະເມືອງສົກປີ ໒໐໐໐." ແລະຈະໄດ້ຈັດໃສ່ໃນເດືອນ ເມສາ ໑, ໒໐໐໐ (April 1, 2000.) ທາງໂຄງການຂອງຣັຖ, ພໍ່ຄ້າຊາວຂາຍ, ແລະໂອງການຕ່າງໆຈະຕ້ອງໃຫ້ສຳເຣັດການສຳຫລວດກວດນັບພົລະເມືອງເພື່ອຈະໄດ້ຮັບການຊ່ວຍເຫລືອໃນຂັ້ນຕົ້ນນັ້ນ. ການຂຽນຕອບໃບສຳຫລວດພົລະເມືອງນີ້,ຈະເຮັດໃຫ້ຄົນບ້ານໄກ້ເຮືອນຄຽງຂອງທ່ານໄດ້ຮັບຜົລປະໂຍດ ແລະ ການຊ່ວຍເຫລືອຕ່າງໆ.

### ການສຳຫລວດພົລະເມືອງນີ້ຈະໃຊ້ເຮັດຫຍັງ?

- ຈະໄດ້ຕັດສິນວ່າສັງຄົມຂອງທ່ານຈະໄດ້ຮັບເງິນການຊ່ວຍເຫລືອທາງດ້ານໂຮງຮຽນເທົ່າໃດ
- ຈະໄດ້ຕັດສິນວ່າໃຫ້ມີການສ້າງຕັ້ງໂຮງຫມໍ, ສູນກາງລ້ຽງດູເດັກ, ແລະຖນົນຫົນທາງຈະຕ້ອງໄດ້ສ້າງຂຶ້ນນັ້ນຢູ່ບ່ອນໃດ
- ຈະໄດ້ຕັດສິນວ່າຈະໃຫ້ມີຜູ້ແທນຣາຊດອນຂອງແຂວງຂອງທ່ານໃຫ້ໄປເຮັດວຽກຢູ່ຣັຖສະພາຜູ້ແທນຣາຊດອນໃຫ້ມີຈຳນວນຈັກຄົນ
- ຈະຈັດໃຫ້ມີເງິນຈຳນວນໄດຈຳນວນນຶ່ງເພື່ອໃຫ້ມີການເປີດໂຄງການຮ່ຳຮຽນຝຶກຊ້ອມວຽກງານ ແລະເງິນທຶນໃຫ້ມີໄວ້ເພື່ອໃຫ້ນັກຮຽນໄດ້ຢືມນັ້ນຂຶ້ນ
- ເພື່ອການປ້ອງກັນການເຫລືອກຊັ້ນວັນນະ,ຕໍ່ຝູງຄົນຊົນຊາດສ່ວນນ້ອຍ,ຕໍ່ຜູ້ທີ່ເສັຍອົງຄະ,ແລະຕໍ່ຜູ້ອາວຸໂສຢູ່ສະຖານທີ່ເຮັດວຽກງານນັ້ນ.

### ເວລາໃດການສຳຫລວດນີ້ຈະໄດ້ມີຂຶ້ນ?

ຈະໄດ້ເລີ້ມຕົ້ນໃນເດືອນ, ມີນາ ຂອງປີ ໒໐໐໐ (**March 2000.**) ທຸກໆຄອບຄົວຈະໄດ້ຮັບຫນັງສືທີ່ຈະສົ່ງມາທາງໄປສະນີເພື່ອຂອງການຈະສຳຫລວດສັມະໂນຄົວພົລະເມືອງນັ້ນ. ໃນເນື້ອເຣື່ອງຂອງຫນັງສືນັ້ນຈະບອກໃຫ້ທ່ານເພື່ອຮ້ອງຂໍເອົາໃບສຳຫລວດໃນພາສາ: ຈີນ, ເກົາຫລີ, ຟີຣິຟປິນ, ຫລືພາສາ ວຽດນາມ. ໃນທ່າງເດືອນດຽວກັນນັ້ນ.ທຸກໆຄອບຄົວທີ່ຢູ່ໃນສະຫະຣັຖອາເມຣິການີ້, ຈະໄດ້ຮັບໃບຂອງການສຳຫລວດສັມະໂນຄົວພົລະເມືອງຈາກທາງໄປສະນີ.ໃນໃບຂອງການສຳຫລວດນັ້ນຈະໄດ້ຖາມທ່ານຄື: ຊື່, ເພດ, ອາຍຸ, ຄວາມກຽວພັນ, ຊັ້ນຊາດເດີມ, ແລະເຊື້ອຊາດຂອງທຸກໆຄົນໃນຄອບຄົວຂອງທ່ານນັ້ນ.

### ການຂຽນໃບສຳຫລວດຂອງທ່ານນັ້ນ !!!

ອີງຕາມກົດຫມາຍແລ້ວ, ທຸກໆຄົນທີ່ໄດ້ໃຫ້ຄຳຕອບຢູ່ໃນໃບສຳຫລວດພົລະເມືອງນີ້; ຈະເກັບໄວ້ເປັນຄວາມລັບທີ່ສຸດ. ເຣື່ອງທຸກຢ່າງຂອງໃບສຳຫລວດພົລະເມືອງຂອງທ່ານນັ້ນຈະບໍ່ເອົາໃຫ້ບຸກຄົນໃດບຸກຄົນນຶ່ງ ຫລືໂອງການຂອງຣັຖໃດໆທັງຫມົດເຊັ່ນ: ອົງການກວດຄົນເຂົ້າເມືອງ ແລະອົງການຕັດສັນຊາດ ຫລືໂອງການພາສີອາກອນນັ້ນ.ການຂຽນຕອບໃບສຳຫລວດນີ້ກໍເພື່ອຈະຊ່ອຍເຮັດໃຫ້ຊາວບ້ານໄກ້ເຮືອນຄຽງຂອງທ່ານຈະໄດ້ຮັບຄວາມຈະເຣີນກ້າວຫນ້າເທົ່ານັ້ນ.

Produced by the National Asian Pacific American Legal Consortium, Washington, DC. January 1999.
Reproduction permitted only with attribution. " Your Response is Important, " Laotian.